PHOUTSADY. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 349 – 357

# ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາ ສາຍຄູພູມສາດລະບົບ 12+4 ປີ 3 ວິທະຍາໄລຄູຄັງໄຂສົກຮຽນ 2021-2022

**ເພັດສະໝອນ ພຸດສະດີ***

*ວິທະຍາໄລຄູຄັງໄຂ, ສປປ ລາວ*

***ຕິດຕໍ່ພົວພັນ:** *ເພັດສະໝອນ ພຸດສະດີ, ວິທະຍາໄລຄູຄັງໄຂ, ເບີໂທ: +856 20 54717789, Email: phetsamonepsd@gmail.com*

**ຂໍ້ມູນບົດຄວາມ:**
*ການສົ່ງບົດ: 08 ພະຈິກ 2023*
*ການປັບປຸງ: 15 ມີນາ 2024*
*ການຕອບຮັບ: 27 ມີນາ 2024*

**ບົດຄັດຫຍໍ້**

ການວິໄຈໃນຄັ້ງນີ້ມີຈຸດປະສົງ ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາສາຍຄູພູມສາດ ລະບົບ 12+4 ປີ 3 ສົກຮຽນ 2021-2022 ວິທະຍາໄລຄູຄັງໄຂ.ກຸ່ມເປົ້າໝາຍທີ່ໃຊ້ໃນການວິໄຈໃນຄັ້ງນີ້ໄດ້ແກ່ ນັກຮຽນສາຍຄູພູມສາດ ລະບົບ 12+4 ປີ 3 ມີຈຳນວນທັງໝົດ 16 ຄົນ, ເຄື່ອງມືທີ່ໃຊ້ໃນການວິໄຈໄດ້ແກ່ ແບບສອບຖາມ, ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນຄື ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ວິເຄາະ ແລະ ການແປຄວາມໝາຍເຊິ່ງຜົນຂອງການວິໄຈພົບວ່າ

ຜົນຂອງການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາສາຍຄູພູມສາດຕໍ່ກັບບັນຫາກ່ຽວກັບການສະຫຼຸບ ແລະ ການປະເມີນຜົນຂອງຄູໃນການຈັດການຮຽນ-ການສອນລາຍວິຊາປະຫວັດເຜົ່າພັນວິທະຍາໃນສາຍຄູພູມມີສາດລະດັບຄວາມເພິ່ງພໍໃຈຂອງນັກຮຽນໂດຍລວມແມ່ນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.2) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8), ການນໍາເຂົ້າສູ່ບົດຮຽນຂອງຄູຄວາມເພິ່ງພໍໃຈຂອງນັກຮຽນໂດຍລວມແມ່ນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8), ການຈັດກິດຈະກໍາຂອງຄູແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານແມ່ນ (SD = 0.8), ການນໍາໃຊ້ຄໍາຖາມຂອງຄູຄວາມເພິ່ງພໍໃຈຂອງນັກຮຽນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8) ແລະ ຜົນຂອງການວິໄຈພົບວ່າ ບັນຫາການນໍາໃຊ້ສື່ການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາຄວາມເພິ່ງພໍໃຈໂດຍລວມຂອງນັກຮຽນແມ່ນຢູ່ໃນລະດັບຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 3.6) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8).

**ຄໍາສັບທີ່ສໍາຄັນ:** *ຄວາມເພິ່ງພໍໃຈ, ນັກສຶກສາ, ການສອນຂອງຄູ, ວິຊາປະຫວັດສາດເຜົ່າພັນວິທະຍາ, ສາຍຄູພູມສາດ.*

PHOUTSADY. (2024). Souphanouvong University Journal of Multidisciplinary Research and Development.
ISSN 2521-0653. Volume 10. Issue 1. Jan - Mar. 2024. Page 349 – 357

# Study the satisfaction of students with the teaching of cthnogrphic history teachers in Geography Course khang khay Teacher Training Colleg 2021-2022

**Phetsamone PHOUTSADY***
*Khang Khay Teacher Training College, Lao PDR*

***Correspondence:***
*Phetsamone PHOUTSADY, khang khay Teacher Training College, Tel: +856 20 54717789, Email:* phetsamonepsd@gmail.com

***Article Info:***
*Submitted: Nov 08, 2023*
*Revised: Mar 15, 2024*
*Accepted: Mar 27, 2024*

**Abstract**

The purpose of this research is to study the satisfaction of students with the teaching of teachers in the subject of history, ethnology, geography, 12+4 year 3, academic year 2021-2022, Khang Khay teacher training College. the target group used in this research is the students of geography teacher system 12+4 year 3, there are a total of 16 people, the tools used in the research are questionnaires, statistics used in data analysis such as average value, standard deviation, analysis and interpretation of the results of the research. the results of the study of the satisfaction of students in the geography teacher's line to the problem of the analysis and evaluation of the teacher in the management of the study-teaching of the ethnographic course in the teacher's line of geography. Introducing the teacher's lesson to the overall satisfaction of the students is at a very high level with a mean value equal to ( $\bar{X}$ = 4.1) and a standard deviation value equal to (SD = 0.8), the organization of the teacher's activities is at a very satisfactory level with the mean value equal to ($\bar{X}$ = 4.1) and the standard deviation value is (SD = 0.8), using the teacher's question, the satisfaction of the students is in the level of satisfaction with the mean value equal to ($\bar{X}$ = 4.1) and the standard deviation value equal to (SD = 0.8) , The results of the research found that the problem of the use of teaching-learning media by teachers in the subject of history and ethnology, the overall satisfaction of students is at a high level with the mean value equal to ($\bar{X}$ = 3.6) and the standard deviation value equal to (SD = 0.8).

**Key words:** *Satisfaction, students, teacher's teaching, ethnographic history, geography teacher.*

## 1. ພາກສະເໜີ

ການທີ່ຈະເຮັດໃຫ້ບຸກຄົນໃນອົງກອນມີຄວາມຕັ້ງໃຈ ແລະ ຄວາມເພິ່ງພໍໃຈຕໍ່ການປະຕິບັດໜ້າທີ່ວຽກງານໃນການສິດສອນຂອງຕົນໃຫ້ມີຜົນສຳເລັດ ແລະ ໄດ້ຮັບປະໂຫຍດສູງສຸດຈະຕ້ອງອາໄສອົງປະກອບຫຼາຍດ້ານປັດໄຈສຳຄັນແມ່ນ ບຸກຄົນຈະຮູ້ສຶກເພິ່ງພໍໃຈໃນວຽກງານທີ່ຕົນຮັບຜິດຊອບ ເມື່ອເຫັນວ່າວຽກງານນັ້ນໄດ້ໃຫ້ຜົນປະໂຫຍດຕອບແທນທັງດ້ານວັດຖຸ ແລະ ຈິດໃຈກໍ່ຈະສາມາດຕອບສະໜອງຄວາມຕ້ອງການພື້ນຖານຂອງບຸກຄົນໄດ້. ນອກຈາກນີ້ຄວາມຮູ້ສຶກ ແລະ ເຈດຕະຄະຕິທີ່ດີຍັງມີສ່ວນຊ່ວຍໃຫ້ເກີດຄວາມເພິ່ງພໍໃຈໃນການເຮັດວຽກງານໃນການສິດສອນຂອງຕົນໄດ້ເຊັ່ນກັນ ແມກຄໍມິກ (McCormick, 1977: 98).

ຈາກແນວຄວາມຄິດຂອງນັກວິຊາການທີ່ກ່າວມານັ້ນໄດ້ຊີ້ໃຫ້ເຫັນວ່າ: ການທີ່ອົງກອນໃດໆໜຶ່ງຈະບັນລຸເປົ້າໝາຍຢ່າງມີປະສິດທິພາບໄດ້ນັ້ນມາຈາກການທີ່ບຸກຄົນມີຂວັນກຳລັງໃຈ ແລະ ມີຄວາມເພິ່ງພໍໃຈໃນການເຮັດວຽກງານການສິດສອນຂອງຕົນເອງເຊິ່ງຈະຕ້ອງໄດ້ອາໄສການຈູງໃຈເປັນອົງປະກອບທີ່ສຳຄັນ, ຄວາມເພິ່ງພໍໃຈໃນການເຮັດວຽກງານການສິດສອນຈຶ່ງມີຄວາມໝາຍ ຄວາມສຳຄັນທັງຜູ້ສອນ ແລະ ຜູ້ຮຽນ ໂດຍສະເພາະແມ່ນຜູ້ທີ່ໄດ້ສິດສອນເພາະນອກຈາກຜູ້ສິດສອນຈະມີໜ້າທີ່ໃນການກຳນົດແຜນການຈັດກິດຈະກຳການຮຽນ-ການສອນແລ້ວຍັງໄດ້ປະຕິບັດຕົນເອງເພື່ອເປັນແບບຢ່າງທີ່ດີແກ່ນັກຮຽນ, ໜ້າທີ່ສຳຄັນອີກປະການໜຶ່ງກໍຄືການຊັກຈູງ, ໂນ້ມນ້າວຈິດໃຈຂອງນັກຮຽນ ແລະ ຜູ້ຮ່ວມງານໃຫ້ຮ່ວມມືກັນທຸ່ມເທຄວາມສາມາດຂອງແຕ່ລະບຸກຄົນໃຫ້ເກີດປະໂຫຍດຕໍ່ໜ່ວຍງານໃຫ້ບັນລຸຜົນສຳເລັດຕາມຈຸດປະສົງໄດ້ຢ່າງມີປະສິດທິພາບ.

ດ້ານວຽກງານການສຶກສາເຮົາເຫັນວ່າ ຄູເປັນຜູ້ທີ່ມີ

ບົດບາດສຳຄັນຕໍ່ການພັດທະນາຄຸນນະພາບການສຶກສາເຊິ່ງຈະສົ່ງຜົນຕໍ່ການພັດທະນາປະເທດຊາດໃນດ້ານຕ່າງໆ, ຄູເປັນຜູ້ທີ່ມີບົດບາດສຳຄັນໃນການພັດທະນານັກຮຽນ, ນັກສຶກສາໃຫ້ກາຍເປັນຄົນດີ, ຄົນເກັ່ງ, ມີຄວາມຮູ້, ຄວາມສາມາດ ແລະ ມີການພັດທະນາໄປຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາຂອງຊາດ (ກະຊວງສຶກສາທິການ ແລະ ກິລາ, 2013). ດັ່ງນັ້ນ, ພັກ-ລັດຖະບານໄດ້ເອົາໃຈໃສ່ການປະຕິບັດນະໂຍບາຍເພື່ອເປັນການສ້າງຂວັນ ແລະ ກຳລັງໃຈໃຫ້ແກ່ຄູເພື່ອເກີດແກ່ຄວາມເພິ່ງພໍໃຈຫຼາຍດ້ານເຊັ່ນ: ຖານະທາງວິຊາການ (ຕຳແໜ່ງວິຊາການ ແລະ ນາມມະຍົດ) ກຽດສັກສີໃນສັງຄົມ, ຊີວິດການເປັນຢູ່, ການຍ້ອງຍໍ, ການລາພັກ, ການຮັບເບ້ຍບຳນານ ແລະ ຄູຢູ່ເຂດຫ່າງໄກສອກຫຼີກ. ຄຸນນະພາບຂອງນັກຮຽນ, ນັກສຶກສາທີ່ຈະມີກຳລັງໃຈ, ຄວາມຕັ້ງໃຈ, ຄວາມເພິ່ງພໍໃຈນັ້ນແມ່ນການເຮັດວຽກງານຂອງຄູເປັນຫຼັກ (ກະຊວງສຶກສາທິການ ແລະ ກິລາ, 2012).

ຍ້ອນເຫັນໄດ້ບົດບາດ ແລະ ຄວາມສຳຄັນດັ່ງກ່າວ ພັກ-ລັດຖະບານເຮົາ ຈຶ່ງໄດ້ຫັນແນວທາງເພື່ອຍຶດຖືວຽກງານການສຶກສາແມ່ນເປັນບັນຫາສຳຄັນເວົ້າລວມ ເວົ້າສະເພາະກໍແມ່ນວິຊາປະຫວັດສາດ ເຊິ່ງຈັດເຂົ້າໃນວຽກງານການຮຽນ-ການສອນ ຢູ່ໃນໂຮງຮຽນແຫ່ງຕ່າງໆເພື່ອແນ່ໃສ່ຮັບປະກັນໃຫ້ຜູ້ຮຽນ, ຜູ້ສອນໄດ້ສຶກສາຄົ້ນຄ້ວາເຖິງສິ່ງທີ່ກ່ຽວຂ້ອງໃນວຽກງານການຮຽນ-ການສອນ ຂອງຕົນເປັນຢ່າງດີໂດຍປະຕິບັດຕາມຫຼັກວິຊາການບົນພື້ນຖານທິດຊີ້ນຳຂອງພັກ-ລັດວາງອອກຢ່າງເຂັ້ມງວດ ແລະ ມີວິຊາຄົບຕາມຫຼັກສູດຢູ່ໃນໂຮງຮຽນແຫ່ງຕ່າງໆທັງນີ້ກໍເພື່ອແນ່ໃສ່ເຮັດໃຫ້ນັກຮຽນມີຄວາມຮູ້, ຄວາມສາມາດມີຄວາມເຂົ້າໃຈກ່ຽວກັບເຫດການຕ່າງໆທີ່ເກີດຂຶ້ນຢູ່ບົນໜ້າໂລກຕະຫຼອດເຖິງແບບແຜນການດຳລົງຊີວິດຂອງມວນມະນຸດ, ທັງໝົດນີ້ເຮົາສາມາດເຂົ້າໃຈໄດ້ ແລະ ນຳມາໝູນໃຊ້ເຂົ້າໃນຊີວິດປະຈຳວັນໃຫ້ເກີດຜົນ. ເມື່ອເຫັນໄດ້ຄວາມສຳຄັນຂອງວິຊາປະຫວັດສາດຕໍ່ກັບຂະແໜງອື່ນນັ້ນ ເພື່ອເຮັດໃຫ້ທຸກຄົນເຂົ້າໃຈຢ່າງຈະແຈ້ງໃນວິຊາປະຫວັດສາດ ພັກ-ລັດຖະບານຈຶ່ງໄດ້ນຳເອົາວິຊາປະຫວັດສາດເຂົ້າມາສອນຢູ່ໃນໂຮງຮຽນແຫ່ງຕ່າງໆໃນຂອບເຂດທົ່ວປະເທດທີ່ຂຶ້ນກັບກະຊວງສຶກສາທິການ. ຈາກເຫດຜົນທີ່ກ່າວມາຂ້າງເທິງນັ້ນ ກຸ່ມວິໄຈຈຶ່ງເຫັນໄດ້ຄວາມສຳຄັນໃນການຈັດກິດຈະກຳການຮຽນ-ການສອນ ໂດຍເລືອກເອົາວິທະຍາໄລຄູຄັງໄຂເມືອງແປກ ແຂວງຊຽງຂວາງ ເປັນສະຖານທີ່ສຶກສາ ແລະ ເຊື່ອແນ່ວ່າບົດວິໄຈນີ້ຈະເປັນປະໂຫຍດໃຫ້ແກ່ຄູຜູ້ສອນ ແລະ ເປັນປະໂຫຍດໃຫ້ແກ່ຜູ້ບໍລິຫານກໍຄືຜູ້ວາງແຜນໃນການຈັດການຮຽນ-ການສອນໃນຕໍ່ໜ້າໃຫ້ດີຂຶ້ນ. ດັ່ງນັ້ນ, ໃນນາມເປັນຜູ້ວິໄຈຈຶ່ງໄດ້ກຳນົດຫົວຂໍ້ຄື: ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາສາຍຄູພູມສາດລະບົບ 12+4 ປີ 3 ວິທະຍາໄລຄູຄັງໄຂສົກຮຽນ 2021-2022 ເພື່ອນຳຜົນການວິໄຈໄປໃຊ້ເປັນຂໍ້ມູນພື້ນຖານໃນການປັບປຸງການຈັດກນຈຮຽນ-ການສອນ ຂອງຄູໃນສາຍພູມສາດໃຫ້ມີຄວາມເຂັ້ມແຂງທາງດ້ານຄຸນນະພາບ ແລະ ເປັນທີ່ຍອມຮັບຂອງສັງຄົມດີຂຶ້ນເທື່ອລະກ້າວ. ຈຸດປະສົງການຄົ້ນຄ້ວາຄັ້ງນີ້ແມ່ນເພື່ອສຶກສາລະດັບຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການສອນຂອງຄູໃນລາຍວິຊາ ປະຫວັດສາດເຜົ່າພັນວິທະຍາ ໃນສາຍຄູພູມສາດ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການສອນຂອງຄູໃນລາຍວິຊາ ປະຫວັດສາດເຜົ່າພັນວິທະຍາ ໃນສາຍຄູພູມສາດຄັ້ງນີ້ເປັນການຄົ້ນຄ້ວາກັບກຸ່ມເປົ້າໝາຍທີ່ເປັນນັກສຶກສາຄູສາຍຄູພູມສາດທີໂຮງຮຽນວິທະຍາໄລຄູຄັງໄຂ. ດັ່ງນັ້ນ, ຜູ້ຄົ້ນຄ້ວາໄດ້ມີວິທີການຄົ້ນຄ້ວາດັ່ງນີ້:

**2.1 ກຸ່ມເປົ້າໝາຍກຸ່ມເປົ້າໝາຍ** ທີ່ໃຊ້ໃນການວິໄຈຄັ້ງນີ້ເປັນນັກສຶກສາສາຍຄູພູມສາດທີ່ໂຮງຮຽນວິທະຍາໄລຄູຄັງໄຂສົກຮຽນ 2021-2022 ຈຳນວນ 16 ຄົນ

### 2.2 ຮູບແບບການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ໃຊ້ແບບແຜນການຄົ້ນຄ້ວາມີກຸ່ມເປົ້າໝາຍ 1 ກຸ່ມໂດຍນຳໃຊ້ແບບສອບຖາມກັບນັກສຶກສາລະດັບຄວາມເຂົ້າໃຈ

❖ ສັນຍາລັກທີ່ໃຊ້ໃນການອອກແບບຄົ້ນຄ້ວາ

5 ໝາຍເຖິງລະດັບຄວາມເພິ່ງພໍໃຈຫຼາຍທີ່ສຸດ
4 ໝາຍເຖິງລະດັບຄວາມເພິ່ງພໍໃຈຫຼາຍ
3 ໝາຍເຖິງລະດັບຄວາມເພິ່ງພໍໃຈປານກາງ
2 ໝາຍເຖິງລະດັບຄວາມເພິ່ງພໍໃຈໜ້ອຍ
1 ໝາຍເຖິງລະດັບຄວາມເພິ່ງພໍໃຈໜ້ອຍທີ່ສຸດ

### 2.3 ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ 2 ຊຸດຄື:

ເຄື່ອງມືຊຸດທີ 1 ແຜນການສອນວິຊາປະຫວັດສາດເຜົ່າພັນວິທະຍາດຳເນີນຕາມຂັ້ນຕອນຄື:

1) ສຶກສາເອກະສານ, ງານວິໄຈທີ່ກ່ຽວຂ້ອງກັບຄວາມເພິ່ງພໍໃຈໃນດ້ານຄວາມຄິດການພັດທະນາການຈັດການຮຽນ-ການສອນ, ທິດສະດີການຮຽນຮູ້, ທິດສະດີການ

ພັດທະນາເພື່ອນຳມາເປັນພື້ນຖານໃຫ້ແກ່ການສ້າງແຜນການສອນ.

2) ພິຈາລະນາແບບປະເມີນຄ່າດັດສະນີຄວາມສອດຄ່ອງເທົ່າກັບ ຫຼື ຫຼາຍກວ່າ 0.5 ຂຶ້ນໄປຈຶ່ງຖືວ່າແຜນການສອນທີ່ໄດ້ສ້າງຂຶ້ນມີຄວາມສອດຄ່ອງກັນ ແລະ ສາມາດນຳໃຊ້ໄດ້

ເຄື່ອງມືຊຸດທີ2: ແບບສອບຖາມ ສຶກສາຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາຜູ້ວິໄຈດຳເນີນການສ້າງດັ່ງນີ້:

- ສ້າງແບບສອບຖາມເປັນມາດຕາສ່ວນປະມານຄ່າ 5 ລະດັບໂດຍມີເກນການໃຫ້ຄະແນນໃນການວິເຄາະຂໍ້ມູນ

- ນຳເອົາແບບທົດສອບແບບປະເມີນຄວາມສອດຄ່ອງໄປໃຫ້ຜູ້ຊ່ຽວຊານກວດຄວາມທ່ຽງຕົງຂອງເນື້ອໃນໂດຍສະແດງຄວາມຄິດເຫັນ. ຈາກນັ້ນ, ນຳເອົາຄຳຕອບຂອງຜູ້ຊ່ຽວຊານມາແປງເປັນຄ່າຄະແນນດັດສະນີຄວາມສອດຄ່ອງ (IOC) ເຊັ່ນ: ຄ່າດັດສະນີຄວາມສອດຄ່ອງເທົ່າກັບ ຫຼື ຫຼາຍກວ່າ 0.5 ຂຶ້ນໄປຈຶ່ງຖືວ່າແບບທົດສອບດັ່ງກວ່າມີຄວາມສອດຄ່ອງກັນ ແລະ ສາມາດນຳໃຊ້ໄດ້.

ຄະແນນທີ່ໄດ້ຈາກການປະເມີນຄວາມເໝາະສົມຂອງແບບສອບຖາມຄວາມເພິ່ງພໍໃຈສາມາດແປຄວາມໝາຍໂດຍໃຊ້ເກນຄ່າຄະແນນສະເລ່ຍເຊັ່ນ: ພິຈາລະນາຄ່າສະເລ່ຍຄວາມຄິດເຫັນຂອງຜູ້ຊ່ຽວຊານຕັ້ງແຕ່ 3.41 ຂຶ້ນໄປຖືວ່າແບບສອບຖາມຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນການສອນປະຫວັດສາດເຜົ່າພັນທີ່ສ້າງຂຶ້ນມີຄຸນນະພາບເໝາະສົມ.

## 2.4 ການເກັບກຳຮວບຮວມຂໍ້ມູນ

ການເກັບກຳຮວບຮວມຂໍ້ມູນສຳລັບການວິໄຈຄັ້ງນີ້ແມ່ນດຳເນີນຕາມຂັ້ນຕອນດັ່ງນີ້:

- ສຶກສາຮວບຮວມແນວຄວາມຄິດ ແລະ ການພັດທະນາການສອນ, ທິດສະດີການຮຽນຮູ້, ງານວິໄຈທີ່ກ່ຽວຂ້ອງ

- ຮວບຮວມຂໍ້ມູນຈາກການປະເມີນຄວາມເໝາະສົມຂອງຜູ້ຊ່ຽວຊານເພື່ອນຳໄປປັບປຸງແກ້ໄຂ

- ຮວບຮວມຂໍ້ມູນຈາກການປະເມີນແບບສອບຖາມຄວາມເພິ່ງພໍໃຈຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນຈາກນັກສຶກສາ

## 2.5 ການວິເຄາະຂໍ້ມູນ

ການປະເມີນຄວາມເໝາະສົມແບບສອບຖາມຄວາມເພິ່ງພໍໃຈຂອງນັກສຶກສາໂດຍໃຊ້ຄ່າສະເລ່ຍ.

ການປະເມີນຄວາມສອດຄ່ອງຂອງແບບສອບຖາມໂດຍໃຊ້ຄ່າດັດສະນີຄວາມສອດຄ່ອງ (IOC).

ປຽບທຽບຄະແນນສະເລ່ຍຂອງຜູ້ຕອບແບບສອບຖາມໂດຍການນຳໃຊ້ຄ່າສະເລ່ຍ ແລະ ຄ່າຂອງສ່ວນບ່ຽງເບນມາດຕະຖານ

ການວິເຄາະລະດັບຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໂດຍການນຳເອົາຄະແນນທີ່ໄດ້ຮັບຈາກແບບສອບຖາມແປຄວາມໝາຍຕາມເກນຄ່າສະເລ່ຍທີ່ໄດ້ກຳນົດໄວ້.

## 3. ຜົນໄດ້ຮັບ

ຈາກການສຶກສາໃນຫົວຂໍ້ ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາ ປະຫວັດສາດເຜົ່າພັນວິທະຍາ ສາຍຄູພູມສາດລະບົບ 12+4 ປີ 3 ວິທະຍາໄລຄູຄັງໄຂສົກຮຽນ 2021-2022 ທາງກຸ່ມວິໄຈໄດ້ເວົ້າເຖິງຈຸດສຳຄັນທີ່ຄົ້ນພົບຈາກການວິໄຈຕາມຈຸດປະສົງ ແລະ ແນວຄິດທິດສະດີຂອງການວິໄຈດັ່ງຕໍ່ໄປນີ້:

ຜົນການສຶກສາພົບວ່າຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການນຳເຂົ້າສູ່ບົດຮຽນຂອງຄູຄວາມເພິ່ງພໍໃຈໂດຍລວມແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\overline{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8)

ຜົນຂອງການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາກ່ຽວກັບການຈັດກິດຈະກຳຂອງຄູຄວາມເພິ່ງພໍໃຈໂດຍລວມແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\overline{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານແມ່ນ (SD = 0.8).

ຜົນຂອງການສຶກສາຄວາມເພິ່ງພໍໃຈກ່ຽວກັບການນຳໃຊ້ຄຳຖາມຂອງຄູຄວາມເພິ່ງພໍໃຈໂດຍລວມຢູ່ໃນຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\overline{X}$ = 4.1) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8).

ຜົນຂອງການສຶກສາກ່ຽວກັບການນຳໃຊ້ສື່ການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາຄວາມເພິ່ງພໍໃຈໂດຍລວມແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\overline{X}$ = 3.6) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8)

ຜົນຂອງການສຶກສາບັນຫາກ່ຽວກັບການສະຫຼຸບ ແລະ ການປະເມີນຜົນຂອງຄູໃນການຈັດການຮຽນການສອນລາຍວິຊາປະຫວັດເຜົ່າພັນວິທະຍາໃນສາຍຄູພູມມີສາດລະດັບຄວາມເພິ່ງພໍໃຈໂດຍລວມແມ່ນຢູ່ໃນລະດັບຄວາມ

ເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.2) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8).

ຜົນຂອງການສຶກສາສະແດງໃຫ້ເຫັນວ່າຄວາມເພິ່ງພໍໃຈຕໍ່ການສອນຂອງຄູຂອງສຶກສາສາຍຄູພູມສາດໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາໃນແຕ່ລະດ້ານໂດຍລວມແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍເທົ່າກັບ ($\bar{X}$ = 4.02) ແລະ ຄ່າຜັນປ່ຽນມາດຕະຖານເທົ່າກັບ (SD = 0.8).

## 4. ວິພາກຜົນ

1. ຜົນການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການນໍາເຂົ້າສູ່ບົດຮຽນຂອງຄູຄວາມເພິ່ງພໍໃຈຂອງນັກຮຽນແມ່ນຢູ່ໃນລະດັບຄວາມຄິດເຫັນຫຼາຍ ກໍ່ເນື່ອງຈາກວ່າຄູໄດ້ມີຄວາມເອົາໃຈໃສ່ໃນການຄົ້ນຄວ້າບົດຮຽນ ແລະ ແຕ່ງບົດສອນກະກຽມອຸປະກອນຕ່າງໆກ່ອນການຂຶ້ນຫ້ອງເປັນຢ່າງດີ ແລະ ມີຄວາມຮັບຜິດຊອບສູງຕໍ່ການສອນໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາໃນສາຍຄູພູມມີສາດ, ເຊິ່ງແຕກຕ່າງກັບການຄົ້ນຄວ້າຂອງ Phungdee & Krongyut (2016) ໄດ້ຄົ້ນຄວ້າກ່ຽວກັບ ຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ-ການສອນໃນຫຼັກສູດ ຂອງພາກວິຊາສະຖິຕິ ຄະນະວິທະຍາສາດ ມະຫາວິທະຍາໄລຂອນແກ່ນ ຜົນການຄົ້ນຄວ້າພົບວ່າ ດ້ານວິທີການສອນ ແລະ ກິດຈະກໍາການຮຽນ-ການສອນ ແລະ ດ້ານຄູຜູ້ສອນ ແມ່ນມີຄວາມເພິ່ງພໍໃຈໃນລະດັບປານກາງ.

2. ຜົນຂອງການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາກ່ຽວກັບຈັດກິດຈະກໍາຂອງຄູ ຄວາມເພິ່ງພໍໃຈຂອງນັກຮຽນແມ່ນຢູ່ໃນລະດັບຄວາມຄວາມເພິ່ງພໍໃຈຫຼາຍ ກໍ່ເນື່ອງຈາກວ່າຄູມີທັກສະ, ມີຄວາມສາມາດ ແລະ ມີຄວາມຮູ້ໃນການຈັດກິດຈະກໍາການຮຽນ-ການສອນເປັນຢ່າງດີ, ເຊິ່ງສອດຄ່ອງກັບ Thahak (2546) ໄດ້ໃຫ້ຄວາມໝາຍວ່າ "ການຈັດການຮຽນ-ການສອນໝາຍເຖິງການປະຕິສໍາພັນລະຫວ່າງຄູຜູ້ສອນກັບນັກຮຽນ, ການຖ່າຍທອດຄວາມຮູ້, ຄວາມຄິດ ຫຼື ແນວປະຕິບັດຈາກຄູຜູ້ສອນໄປສູ່ນັກຮຽນດ້ວຍວິທີຕາມທີ່ຄູຜູ້ສອນໄດ້ເລືອກສອນແລ້ວ" ແລະ ຍັງສອດຄ່ອງກັບ Sinyo (2540) ກ່າວວ່າ "ການຈັດການຮຽນ-ການສອນ ຫຼື ການຈັດປະສົບການຮຽນຮູ້ໃຫ້ແກ່ຜູ້ຮຽນໃນວິຊາທາງພາກທິດສະດີ ແລະ ພາກປະຕິບັດໄດ້ຫຼາຍວິທີ ແຕ່ລະເນື້ອໃນສໍາຄັນເຮົາອາດຈະຈໍາແນກການຈັດການຮຽນ-ການສອນໄດ້ 3 ລັກສະນະຄື ຜູ້ສອນເປັນຜູ້ໃຫ້ເນື້ອໃນ, ຜູ້ສອນ ແລະ ຜູ້ຮຽນຮ່ວມກັນຄົ້ນຄິດຫາຄວາມຮູ້ ແລະ ຜູ້ຮຽນສຶກສາເອງຈາກສື່ການສອນທີ່ຜູ້ສອນໄດ້ກຽມໄວ້ໃຫ້" ແລະ ມັນຍັງສອດຄ່ອງກັບ Suphasip (2554) ກ່າວວ່າ "ການຈັດການຮຽນ-ການສອນໝາຍເຖິງຂະບວນການພົວພັນລະຫວ່າງຜູ້ສອນກັບຜູ້ຮຽນເພື່ອຖ່ອຍທອດຄວາມຮູ້, ຄວາມຄິດ, ຫຼື ແບບປະຕິບັດເພື່ອໃຫ້ຜູ້ນຮຽນເກີດການຮຽນຮູ້ມີປະສົບການທາງດ້ານທັດສະນະຄະຕິ ແລະ ພຶດຕິກໍາຕາມເປົ້າໝາຍທີ່ກໍານົດໄວ້ຢ່າງມີປະສິດທິພາບໂດຍອາໄສຂະບວນການຈັດການຮຽນ-ການສອນຕ່າງໆທີ່ມີຄວາມເໝາະສົມກັບຜູ້ຮຽນ" ແລະ ແຕກຕ່າງກັບການຄົ້ນຄວ້າຂອງ Phungdee & Krongyut (2016) ໄດ້ຄົ້ນຄວ້າກ່ຽວກັບ ຄວາມເພິ່ງພໍໃຈທີ່ມີຕໍ່ການຈັດການຮຽນ-ການສອນໃນຫຼັກສູດ ຂອງພາກວິຊາສະຖິຕິ ຄະນະວິທະຍາສາດ ມະຫາວິທະຍາໄລຂອນແກ່ນ ຜົນການຄົ້ນຄວ້າພົບວ່າ ກິດຈະກໍາການຮຽນ-ການສອນ ແລະ ດ້ານຄູຜູ້ສອນ ແມ່ນມີຄວາມເພິ່ງພໍໃຈໃນລະດັບປານກາງ.

3. ຜົນຂອງການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາກ່ຽວກັບການນໍາໃຊ້ຄໍາຖາມຂອງຄູຄວາມເພິ່ງພໍໃຈຂອງນັກຮຽນຢູ່ໃນລະດັບຫຼາຍກໍ່ເນື່ອງຈາກວ່າຄູມີຄວາມເຂົ້າໃຈຕໍ່ບົດຮຽນ ແລະ ຈໍາແນກໄດ້ຄວາມຮັບຮູ້ຂອງນັກຮຽນແຕ່ລະຄົນໃນຫ້ອງຮຽນຈຶ່ງສາມາດຕັ້ງຄໍາຖາມສົນທະນາກັບນັກຮຽນຕາມແຕ່ລະດັບຄວາມຮັບຮູ້ຂອງນັກຮຽນແຕ່ລະຄົນເຊິ່ງສອດຄ່ອງກັບ Xayason (2020) ການຕັ້ງຄໍາຖາມຕ້ອງມີຄວາມຮູ້ ແລະ ມີສີລະປະ. ສະນັ້ນ ການໃຊ້ຄໍາຖາມຢ່າງມີປະສິດທິພາບຈຶ່ງຈໍາເປັນຄູຈະຕ້ອງສຶກສາເຖິງລັກສະນະຂອງຄໍາຖາມ ແລະ ເຝິກແອບການຕັ້ງຄໍາຖາມເພື່ອໃຫ້ຄູມີຄວາມຊິນເຄີຍ, ມີສີລະປະໃນການຖາມ ແລະ ເປັນການດຶງດູດຄວາມສົນໃຈຂອງນັກຮຽນ. ການຕັ້ງຄໍາຖາມຄວນເຝິກແອບຕາມແນວທາງບາງດ້ານຄື ຖາມດ້ານຄວາມໝັ້ນໃຈ, ການຖາມຕ້ອງກົມກຽວກັບກິດຈະກໍາການສອນ, ຖາມໂດຍໃຊ້ພາສາເວົ້າງ່າຍໆ, ປ່ອຍເວລາໃຫ້ນັກຮຽນຄິດກ່ອນຈຶ່ງຕອບ, ຖາມເພື່ອໃຫ້ຫຼາຍຄົນມີໂອກາດໄດ້ຕອບ, ຄວນໃຊ້ຄໍາຖາມຫຼາຍປະເພດ. ໃນການສອນແຕ່ລະຄັ້ງຄວນໃຊ້ທ່າທີ ແລະ ນໍ້າໜັກຂອງສຽງປະກອບເຂົ້າໃນການຖາມ ແລະ ການຖາມເຈາະຈີ້ມເພື່ອໃຫ້ໄດ້ຄໍາຕອບທີ່ຊັດເຈນຂຶ້ນ.

4. ຜົນຂອງການສຶກສາກ່ຽວກັບບັນຫາການນໍາໃຊ້ສື່ການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາຄວາມເພິ່ງພໍໃຈຂອງນັກສຶກສາແມ່ນຢູ່ໃນ

ລະດັບຄວາມເພິ່ງພໍໃຈຫຼາຍເນື່ອງຈາກວ່າຄູຮູ້ໝູນໃຊ້ສື່ຕ່າງໆຢ່າງມີຫົວຄິດປະດິດສ້າງ, ຄູນຳໃຊ້ສື່ການສອນຈະແຈ້ງ ແລະ ເໝາະສົມກັບເນື້ອໃນຂອງບົດຮຽນ ແລະ ຄູຮູ້ນຳໃຊ້ສື່ການສອນໄດ້ຢ່າງຄ່ອງແຄ້ວ ແລະ ຖືກຕາມຂັ້ນຕອນເຊິ່ງມັນສອດຄ່ອງກັບທິດສະດີຂອງ Good (1973) ອ້າງເຖິງໃນ Suthep (2535) ກ່າວວ່າສື່ການສອນແມ່ນວິທີການ ຫຼື ວັດສະດຸທີ່ສະແດງໃຫ້ເຫັນເນື້ອຫາສາລະຢ່າງສົມບູນແບບໂດຍຕົວຂອງມັນເອງ ແລະ ເປັນຜູ້ສົ່ງເສີມຢ່າງກ້ວາງຂວາງຫຼາຍກ່ວາທີ່ຈະເປັນສ່ວນປະກອບຂອງຂະບວນການ ໃນການຮຽນ-ການສອນ ແລະ ສອດຄ່ອງກັບ Page & Thomas (1977) ອ້າງເຖິງໃນ Suthep (2535) ກ່າວວ່າ ສື່ການສອນແມ່ນເຄື່ອງມືທາງກາຍະພາບຂອງເທັກໂນໂລຢີທາງການສຶກສາ ຫຼື ເທັກໂນໂລຢີທາງການຮຽນ-ການສອນອັນປະກອບດ້ວຍສິ່ພິມ, ຟີມ, ເທັບ ແລະ ເຄື່ອງບັນທຶກສຽງເຊິ່ງນຳມາໃຊ້ເພື່ອສົ່ງເສີມໃຫ້ຂະບວນການຮຽນ-ການສອນເປັນໄປຢ່າງສົມບູນ ແລະ ກວ້າງຂວາງນອກນີ້ຍັງສອດຄ່ອງກັບ ສຸໂຊຕິ ດາວສຸໂຂ ແລະ ສາໂຣດ ແພ່ງຍັງ (2535) ກ່າວວ່າສື່ການສອນໝາຍເຖິງສິ່ງໃດໆກໍ່ຕາມທີ່ເປັນຕົວກາງໃນການຖ່າຍທອດຄວາມຮູ້ ຫຼື ຊ່ວຍໃນການຮຽນຮູ້,ເຊິ່ງຜູ້ສອນ ແລະ ຜູ້ຮຽນເປັນຜູ້ໃຊ້ເພື່ອຊ່ວຍໃຫ້ການຮຽນ-ການສອນມີປະສິດທິພາບຍິ່ງຂຶ້ນ.

5. ຜົນຂອງການສຶກສາບັນຫາກ່ຽວກັບການສະຫຼຸບ ແລະ ການປະເມີນຜົນຂອງຄູໃນການຈັດການຮຽນການສອນລາຍວິຊາປະຫວັດເຜົ່າພັນວິທະຍາໃນສາຍຄູພູມມິສາດລະດັບຄວາມເພິ່ງພໍໃຈຂອງນັກສຶກສາແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍກໍ່ເນື່ອງຈາກວ່າການທີ່ຈະເຮັດໃຫ້ນັກຮຽນເກີດຄວາມພໍໃຈຕໍ່ການສອນຂອງຄູແມ່ນປະກອບມີຫຼາຍປັດໃຈສືບທົບເຂົ້າກັນເຊັ່ນ: ການກະກຽມການສອນ, ການນຳເຂົ້າສູ່ບົດຮຽນ, ການຈັດກິດຈະກຳການຮຽນ-ການສອນ, ການນຳໃຊ້ທັກສະການສອນ, ການອະທິບາຍບົດຮຽນ, ການຕັ້ງຄຳຖາມ, ການຍົກຕົວຢ່າງ, ການໃຫ້ກຳລັງໃຈ , ການສະຫຼຸບ ແລະ ການວັດປະເມີນຜົນການຮຽນຂອງນັກຮຽນຂອງຜູ້ຮຽນເຊິ່ງສອດຄ່ອງກັບ Souaydouang (2547) ໄດ້ສຶກສາຄວາມເພິ່ງພໍໃຈຂອງນັກຮຽນຊັ້ນມັດທະຍົມທີ 1 ຕໍ່ກັບການສອນໃນວິຊາວິທະຍາສາດ ຜົນການວິໄຈພົບວ່າ: ການສອນຂອງຄູທີ່ນັກຮຽນມີຄວາມເພິ່ງພໍໃຈຫຼາຍແມ່ນໃນເວລາສອນຄູໄດ້ຍົກຕົວຢ່າງມາປຽບທຽບໃຫ້ນັກຮຽນຟັງ, ບັນຍາກາດໃນຫ້ອງຮຽນເປັນກັນເອງ, ການຈັດກິດຈະກຳຂອງຄູບໍ່ເປັນໜ້າເບື່ອໜາຍ, ທີການສອນຂອງຄູເປັນໜ້າໜ້າສົນໃຈ, ຄູບໍ່ເຂັ້ມງວດໃນການເຮັດວຽກບ້ານພາຍຫຼັງການຮຽນນັກຮຽນມີຄວາມເພິ່ງພໍໃຈໃນການສອນຂອງຄູຫຼາຍກວ່າເກົ່າຢ່າງມີວິໄນສຳຄັນທາງສະຖິຕິໃນລະດັບ 0.01

6. ຜົນຂອງການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາ ຄວາມເພິ່ງພໍໃຈໂດຍລວມໃນທຸກໆດ້ານແມ່ນມີຄວາມເພິ່ງພໍໃຈຫຼາຍ. ເມື່ອພິຈາລະນາໃນແຕ່ລະດ້ານສະແດງໃຫ້ເຫັນວ່າຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍໃນທຸກດ້ານຕາມລຳດັບແຕ່ຫຼາຍຫາໜ້ອຍເຊັ່ນ: ການສະຫຼຸບ ແລະ ວັດປະເມີນຂອງຄູໂດຍລວມແມ່ນຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍຮອງລົງມາແມ່ນການນຳເຂົ້າສູ່ບົດຮຽນ, ການຈັດກິດຈະກຳຂອງຄູ, ການນຳໃຊ້ຄຳຖາມຂອງຄູ ແລະ ອັນດັບສຸດທ້າຍໄດ້ແກ່ການນຳໃຊ້ສືການຮຽນ-ການສອນຄວາມເພິ່ງພໍໃຈກໍຢູ່ໃນລະດັບຫຼາຍເຊິ່ງມັນສອດຄ່ອງ ສົມບູນ ພອນທະນາພາບ ແລະ ໄຊໂຣ ໄຊອິນດຳ (2518) ກ່າວໄວ້ວ່າ ການທີ່ບຸກຄົນຈະຮຽນຮູ້ ຫຼື ມີການພັດທະນາ ແລະ ຄວາມຈະເລີນງອກງາມນັ້ນ ບຸກຄະລາກອນຕ້ອງຢູ່ໃນສະພາບເພິ່ງພໍໃຈ, ສຸກໃຈ ເປັນເບື້ອງຕົ້ນນັ້ນຄື ບຸກຄົນຈະຕ້ອງໄດ້ຮັບການຈູງໃຈທັງໃນລັກສະນະນາມມະທຳ ແລະ ຮູບປະທຳ ແລະ ຍັງສອດຄ່ອງກັບ Sinyo (2540) ກ່າວວ່າ "ການຈັດການຮຽນ-ການສອນ ຫຼື ການຈັດປະສົບການຮຽນຮູ້ໃຫ້ແກ່ຜູ້ຮຽນໃນວິຊາທາງພາກທິດສະດີ ແລະ ພາກປະຕິບັດໄດ້ຫຼາຍວິທີ ແຕ່ລະເນື້ອໃນສຳຄັນເຮົາອາດຈະຈຳແນກການຈັດການຮຽນ-ການສອນໄດ້ 3 ລັກສະນະຄື ຜູ້ສອນເປັນຜູ້ໃຫ້ເນື້ອໃນ, ຜູ້ສອນ ແລະ ຜູ້ຮຽນຮ່ວມກັນຄົ້ນຄິດຫາຄວາມຮູ້ ແລະ ຜູ້ຮຽນສຶກສາເອງຈາກສື່ການສອນທີ່ຜູ້ສອນໄດ້ກຽມໄວ້ໃຫ້".

## 5. ສະຫຼຸບຜົນ

ຈາກການສຶກສາວິໄຈຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການຈັດການຮຽນ-ການສອນຂອງຄູໃນລາຍວິຊາປະຫວັດສາດເຜົ່າພັນວິທະຍາສາມາດສະຫຼຸບໄດ້ວ່າການຈັດກິດຈະກຳແມ່ນເຮັດໃຫ້ຜູ້ຮຽນເປັນສ່ວນໜຶ່ງໃນການຈັດກິດຈະກຳ ແລະ ເປັນຜູ້ທີ່ມີຄວາມພ້ອມໃນເລື່ອງການຮຽນຮູ້ ແລະ ເຂົ້າໃຈໃນການຮຽນຫຼາຍທີ່ສຸດເຊິ່ງມັນໄດ້ສົ່ງຜົນເຮັດໃຫ້ຜູ້ຮຽນມີຄວາມເຂົ້າໃຈບົດຮຽນຫຼາຍຂຶ້ນ, ຜູ້ຮຽນໄດ້ປະສົບການຈາກການຮຽນຮູ້ ແລະ ການລົງມືພາກປະຕິບັດຕົວຈິງ, ມີຄວາມຕື່ນຕົວ, ມີຄວາມສຸກກັບການໄດ້ສຶກສາຮໍ່າຮຽນໃນພາກຕົວຈິ່ງ ແລະ ໃນພາກປະຕິບັດເຊິ່ງກໍ່ໃຫ້ເກີດມີຄວາມສາມາດ, ຄວາມຄິດ ແລະ ການກະຕຸ້ນໃຫ້ຜູ້ຮຽນເຂົ້າຮ່ວມກິດຈະກຳທີ່ໄດ້ນຳໃຊ້ທັກສະຢ່າງເຕັມທີ່ໃນ

ການຮຽນຮູ້, ຊ່ວຍໃຫ້ມີໂອກາດສ້າງປະຕິສຳພັນກັບເພື່ອນຮ່ວມຮຽນ ແລະ ສະພາບແວດລ້ອມອ້ອມຕົວຕະຫຼອດຮອດການສ້າງຄວາມຮູ້ໄດ້ດ້ວຍຕົວເອງເພື່ອນຳເອົາຄວາມຮູ້ທີ່ໄດ້ຮຽນມາໄປປະຍຸກໃຊ້ໃນສະພາບຄວາມເປັນຈິງໃນຕໍ່ໜ້າ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄ້ວາວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດໃນຮູບການໃດໜຶ່ງຂ້າພະເຈົ້າມີຄວາມຍິນດີທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2012). *ແຜນພັດທະນາຂະແໜງການສຶກສາ ຂອງ ສປປ ລາວ.*

ກະຊວງສຶກສາທິການ ແລະ ກິລາ. (2013). *ແຜນພັດທະນາຂະແໜງການສຶກສາ ຂອງ ສປປ ລາວ.*

Bouthavong, D. (2022). *The satisfaction of students in studying population geography in the 12+4 system 4th year at the Khang Khay Teachers Training College 2021-2022.*

Garkeo, P. (2546). *Study the concept of satisfaction National University*.

Malithong, K. (2543). *Document accompanying lectures on teaching and learning media Lam Kham Heng University*.

Othakam, S. (2541). *The satisfaction in the performance of teachers in the Thai School of Education*. organized by the Office of the National Commission for Primary Education [Mahabandit School] Faculty of Education Administration, Sinakalin Vilot University.

Phabutdi, S. (1998). *History Teaching Method, Social Science System 11+3 Year 2 Vientiane.*

Phomlavanh, B. (2549). *To study the satisfaction of the 6th grade primary school students towards the teaching of Arts and science*.

Phungdee, P., & Krongyut, P. (2016). *Students' satisfaction with teaching and learning management in the course of the Department of statistics. Faculty of science Khon Kaen University year 2013.*

Sinyo, S. (2540). *Research report on operational satisfaction*. Bangkok: JNT.

Soulatham, S. (2002). *Teaching methods according to the constructivist theory Bangkok is a big city*.

Souaydouang, C. (2547). *To study the satisfaction of first year high school students towards teaching in science subjects*.

Sysaath, B. (2011). *Preliminary Research, Bangkok, Surivisason Company Limited*.

Suphasip, S. (2544). *Satisfaction and recommendations to improve satisfaction in the performance of the staff in the office of primary education in Buarapha University*.

Suthep. (2531). *Studying the satisfaction and trust of health care center service providers Bangkok is a big city*.

Thahak, K. (2546). *Satisfaction in the performance of the work of the Ministry of Education's Ministry of Education*.

Thorthu, S. (2019). *Studying the satisfaction with the quality of teaching and learning of teachers in the mathematics department*.

Xayason, M. (2020). *Satisfaction in teaching and learning practices of teachers and students in comprehensive secondary education in Sai Thani District, Vientiane National University*.


**ຕາຕະລາງທີ 1 ສະແດງຜົນການວິເຄາະການຂຶ້ນຫ້ອງຂອງນັກຮຽນ**

| ທັກສະການນຳເຂົ້າສູ່ບົດຮຽນ | | ຜົນການປະເມີນ | | |
|---|---|---|---|---|
| ລຳດັບ | ລາຍການ | $\overline{X}$ | SD | ແປຄວາມໝາຍ |
| 1 | ການຈັດຕັ້ງຫ້ອງ | 4.3 | 0.6 | ຄວາມເພິ່ງພໍໃຈຫຼາຍ |
| 2 | ການທວນຄືນບົດຮຽນເກົ່າ | 4.1 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| 3 | ກິດຈະກຳນຳເຂົ້າສູ່ບົດຮຽນໃໝ່ | 3.8 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| ລະເລ່ຍລວມ | | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |

**ຕາຕະລາງທີ 2 ສະແດງຜົນກ່ຽວກັບບັນຫາທັກສະການຈັດກິດຈະກຳຂອງຄູ**

| ທັກສະການຈັດກິດຈະກຳຂອງຄູ | | ຜົນການປະເມີນ | | |
|---|---|---|---|---|
| ລ/ດ | ລາຍການ | $\overline{X}$ | SD | ແປຄວາມໝາຍ |
| 1 | ກິດຈະກຳດຳເນີນໄປຕາມເວລາທີ່ໄດ້ກຳນົດໄວ້ | 4.2 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| 2 | ກິດຈະກຳມີຄວາມຕໍ່ເນື້ອງ | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 3 | ນັກສຶກສາໄດ້ມີສ່ວນຮ່ວມໃນການເຮັດກິດຈະກຳ | 4.00 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| 4 | ການແນະນຳເຮັດກິດຈະກຳຂອງຄູຈະແຈ້ງ ແລະ ເຂົ້າໃຈດີ | 4.3 | 0.7 | ຄວາມເພິ່ງພໍໃຈຫຼາຍ |
| 5 | ການອະທິບາຍບົດຮຽນຂອງຄູຈະແຈ້ງ ແລະ ເຂົ້າໃຈດີ | 4.00 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 6 | ຄູໄດ້ຟັງຄຳຄິດເຫັນ, ເປີດໂອກາດ ແລະ ໃຫ້ເວລານັກສຶກສາໄດ້ຄົ້ນຄິດ | 4.3 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 7 | ການຈັດກິດຈະກຳຂອງຄູມີຫຼາກຫຼາຍວິທີ | 4.00 | 0.7 | ຄວາມເພິ່ງພໍໃຈຫຼາຍ |
| 8 | ຄູໄດ້ໃຫ້ນັກຮຽນລາຍງານເປັນລາຍບຸກຄົນ ແລະ ເປັນກຸ່ມ | 4.2 | 0.7 | ຄວາມເພິ່ງພໍໃຈຫຼາຍ |
| ສະເລ່ຍລວມ | | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |

**ຕາຕະລາງທີ 3 ສະແດງຜົນກ່ຽວກັບການນຳໃຊ້ຄຳຖາມຂອງຄູ**

| ການນຳໃຊ້ຄຳຖາມຂອງຄູ | | ຜົນການປະເມີນ | | |
|---|---|---|---|---|
| ລ/ດ | ລາຍການ | $\overline{X}$ | SD | ແປຄວາມໝາຍ |
| 1 | ການຕັ້ງຄຳຖາມຂອງຄູງ່າຍດາຍ | 3.8 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| 2 | ຄູໃຫ້ນັກສຶກສາມີເວລາຄົ້ນຄິດກ່ອນການຕອບຄຳຖາມ | 4.2 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 3 | ຄູທວນ ຫຼື ປ່ຽນຄຳຖາມໃຫ້ງ່າຍເມື່ອນັກຮຽນບໍ່ເຂົ້າໃຈຕອບ | 4.00 | 0.6 | ຄວາມເພິ່ງພໍໃຈຫຼາຍ |
| 4 | ຄູຕັ້ງຄຳຖາມຊັດເຈນ ແລະ ກົງກັບເນື້ອໃນຂອງບົດຮຽນ | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 5 | ຄູໄດ້ໃຊ້ຄຳຖາມຢ່າງຫຼາກຫຼາຍ(ເປີດ, ປິດ, ເຈາະຈົ້ມ) | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| ສະເລ່ຍລວມ | | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |

**ຕາຕະລາງທີ 4 ສະແດງຜົນກ່ຽວກັບບັນຫາການນຳໃຊ້ສື່ການຮຽນ-ການສອນຂອງຄູ**

| ການນຳໃຊ້ສື່ການຮຽນ-ການສອນຂອງຄູ | | ຜົນການປະເມີນ | | |
|---|---|---|---|---|
| ລ/ດ | ລາຍການ | $\overline{X}$ | SD | ແປຄວາມໝາຍ |
| 1 | ຄູນຳໃຊ້ສື່ການສອນຈະແຈ້ງ ແລະ ເໝາະສົມກັບເນື້ອໃນຂອງບົດຮຽນ | 3.6 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 2 | ຄູນຳໃຊ້ສື່ການສອນໄດ້ຢ່າງຄ່ອງແຄ້ວ ແລະ ຖືກຕາມ ຂັ້ນຕອນ | 3.8 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 3 | ສື່ສາມາດກະຕຸ້ນໃຫ້ນັກສຶກສາມີຄວາມສົນໃຈ | 3.9 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| 4 | ຄູຮູ້ໝູນໃຊ້ສື່ຕ່າງໆ ຢ່າງມີຫົວຄິດປະດິດສ້າງ | 4.1 | 0.9 | ຄວາມເພິ່ງພໍໃຈຫຼາຍ |
| ສະເລ່ຍລວມ | | 3.6 | 0.8 | ຄວາມເພິ່ງພໍໃຈຫຼາຍ |

**ຕາຕະລາງທີ 5 ສະແດງຜົນກ່ຽວກັບບັນຫາການສະຫຼຸບ ແລະ ການປະເມີນຜົນຂອງຄູ.**

| ການສະຫຼຸບ ແລະ ການປະເມີນຜົນຂອງຄູ | | ຜົນການປະເມີນ | | |
|---|---|---|---|---|
| ລ/ດ | ລາຍການ | $\overline{X}$ | SD | ແປຄວາມໝາຍ |

| | | | | |
|---|---|---|---|---|
| 1 | ການສະຫຼຸບບົດຮຽນຂອງຄູສັ້ນກະທັດຫັດ, ນັກສຶກສາເຂົ້າໃຈໄດ້ງ່າຍ | 4.1 | 0.7 | ຄວາມເພິ່ງພໍໃຈຫຼາຍ |
| 2 | ການປະເມີນຂອງຄູເໝາະສົມກັບເນື້ອໃນຂອງບົດຮຽນ ແລະ ກິດຈະກຳທີ່ໄດ້ເຮັດມາ | 4.3 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 3 | ການປະເມີນຜົນສອດຄ່ອງກັບເນື້ອໃນຂອງບົດຮຽນ | 4.3 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| ສະເລ່ຍລວມ | | 4.2 | 0.8 | ຄວາມເພິ່ງພໍໃຈຫຼາຍ |

**ຕາຕະລາງທີ 6 ການນຳເຂົ້າສູ່ບົດຮຽນ, ການຈັດກິດຈະກຳຂອງຄູ, ການນຳໃຊ້ຄຳຖາມຂອງຄູ, ການນຳໃຊ້ສື່ການຮຽນ-ການສອນ, ການສະຫຼຸບ ແລະ ວັດປະເມີນຂອງຄູໂດຍລວມ ແລະ ໃນແຕ່ລະດ້ານ**

| ລ/ດ | ຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສອນຂອງຄູໃນລາຍວິຊາ ປະຫວັດສາດເຜົ່າພັນວິທະຍາ | $\overline{X}$ | SD | ລະດັບ |
|---|---|---|---|---|
| 1 | ການນຳເຂົ້າສູ່ບົດຮຽນ | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 2 | ການຈັດກິດຈະກຳຂອງຄູ | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 3 | ການນຳໃຊ້ຄຳຖາມຂອງຄູ | 4.1 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 4 | ການນຳໃຊ້ສື່ການຮຽນ-ການສອນ | 3.6 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| 5 | ການສະຫຼຸບ ແລະ ວັດປະເມີນຂອງຄູ | 4.2 | 0.8 | ຄວາມເພິ່ງພໍໃຈຫຼາຍ |
| ຄວາມເພິ່ງພໍໃຈໂດຍລວມ | | 4.02 | 0.8 | ຄວາມເພິ່ງພໍໃຈຫຼາຍ |